**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງວຽງຈັນ

ເມືອງວັງວຽງ

ເລກທີ......໐໙໐......./ຈມ.ວວ

ລົງວັນທີ...໒໘ ມ.ກ. ໒໐໒໒

# ຂໍ້ຕົກລົງ

**ວ່າດ້ວຍ:** ການແຕ່ງຕັ້ງຄະນະບໍລິຫານງານ, ກອງເລຂາ ແລະ ສະມາຊິກເຄືອຂ່າຍພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວເມືອງວັງວຽງ(Vang Vieng Destination Management Network-DMN)

- ອີງຕາມສັນຍາເງິນຊ່ວຍເຫຼືອລ້າລະຫວ່າງລັດຖະບານຂອງ ສປປ ລາວ ແລະ ທະນາຄານພັດທະນາອາຊີ ກ່ຽວກັບການໃຫ້ການຊ່ວຍເຫຼືອລ້າ ໂຄງການພັດທະນາໂຄງລ່າງພື້ນຖານເພື່ອສົ່ງເສີມການທ່ອງທ່ຽວອະນຸພາກພື້ນແມ່ນ້ຳຂອງ ໄລຍະ 2 ໃນ ສປປ ລາວ, ເລກທີ Grant No. 0599 – LAO, ລົງວັນທີ 16/10/2018.
- ອີງຕາມການຕົກລົງເຫັນດີເປັນເອກະພາບຂອງກອງປະຊຸມຜ່ານຮ່າງຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະບໍລິຫານງານ, ກອງເລຂາ ແລະ ສະມາຊິກເຄືອຂ່າຍພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວເມືອງວັງວຽງ, ຄັ້ງວັນທີ 16/12/2021.

## ເຈົ້າເມືອງງວັງວຽງ ຕົກລົງ:

**ມາດຕາທີ 01:** ແຕ່ງຕັ້ງຄະນະບໍລິຫານງານ, ກອງເລຂາ ແລະ ສະມາຊິກເຄືອຂ່າຍພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວເມືອງວັງວຽງ ເຊິ່ງປະກອບມີບັນດາທ່ານດັ່ງລຸ່ມນີ້:

**I.** ຄະນະບໍລິຫານງານເຄືອຂ່າຍ DMN ເມືອງວັງວຽງແມ່ນປະກອບມີ:

1) ທ່ານ ດວງດາລາ ພວງຈັນລາ ຮອງຫົວໜ້າຫ້ອງການ ຖວທ ເມືອງວັງວຽງ **ເປັນຫົວໜ້າ**
2) ທ່ານ ສົມພັນ ສີສຸລາດ ຫົວໜ້າກຸ່ມໂຮງແຮມ-ເຮືອນພັກເມືອງວັງວຽງ **ເປັນຮອງ**
3) ທ່ານ ບຸນພັນ ວົງສຳພັນ ປະທານນັກທຸລະກິດໜຸ່ມ, ຄະນະ ສຄອ ເມືອງວັງວຽງ **ເປັນຮອງ**
4) ທ່ານ ນາງ ວຽງສັກດາ ແສງສຸລິນ ຮອງຫົວໜ້າກຸ່ມຮ້ານອາຫານ ແລະ ຮ້ານກິນດື່ມເມືອງວັງວຽງ **ເປັນຄະນະ**
5) ທ່ານ ນາງ ພູຊຳ ຈັນທະຄຳລຽນ ຄະນະກຸ່ມໂຮງແຮມ-ເຮືອນພັກເມືອງວັງວຽງ **ເປັນຄະນະ**

➢ **ໜ້າທີ່ຂອງຄະນະບໍລິຫານເຄືອຂ່າຍ DMN ເມືອງວັງວຽງ**

1) ໃຫ້ທິດຊີ້ນຳໃນການສ້າງ, ຈັດຕັ້ງປະຕິບັດ ແລະ ທົບທວນຄວາມຄືບໜ້າການຈັດຕັ້ງປະຕິບັດແຜນກິດຈະກຳພາກລັດ ແລະ ພາກທຸລະກິດ ໃນການພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວຂອງເມືອງວັງວຽງປະຈຳປີ ຜ່ານກອງປະຊຸມເຄືອຂ່າຍ DMN ເມືອງວັງວຽງ ທີ່ຈະໄດ້ຈັດຂຶ້ນຢ່າງໜ້ອຍ 2 ຄັ້ງຕໍ່ປີ ໂດຍການເປັນເຈົ້າການຮ່ວມກັນລະຫວ່າງພາກລັດ ແລະ ພາກທຸລະກິດ. ຜູ້ເຂົ້າຮ່ວມກອງ



สแกนด้วย CamScanner

ປະຊຸມເຄືອຂ່າຍແມ່ນປະກອບມີ ຄະນະບໍລິຫານງານ, ກອງເລຂາ ແລະ ສະມາຊິກເຄືອຂ່າຍ DMN ເມືອງວັງວຽງ, ໂຄງການ ແລະ ອົງການຈັດຕັ້ງສາກົນໃນຂະແໜງການທ່ອງທ່ຽວເມືອງວັງວຽງ. ພາກລັດຈາກຂະແໜງການອື່ນ ແລະ ພາກທຸລະກິດທີ່ບໍ່ໄດ້ກຳນົດຢູ່ໃນໂຄງປະກອບເຄືອຂ່າຍ ຈະຖືກເຊີນເຂົ້າຮ່ວມກອງປະຊຸມ ອີງຕາມຫົວຂໍ້ການສົນທະນາ (ແຜນວາດທີ 1: ໂຄງປະກອບເຄືອຂ່າຍ DMN ເມືອງວັງວຽງ).

2) ເປັນເຈົ້າການໃນການນຳເອົາບັນຫາ ແລະ ອຸປະສັກໃນການພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວເມືອງວັງວຽງ ທີ່ຖືກຍົກຂຶ້ນໃນກອງປະຊຸມເຄືອຂ່າຍເຊິ່ງຕິດພັນກັບຂະແໜງການອື່ນ ສະເໜີຕໍ່ການນຳຂອງເມືອງເພື່ອເປັນຂົວຕໍ່ປະສານກັບຂະແໜງການກ່ຽວຂ້ອງ.

## II. ກອງເລຂາເຄືອຂ່າຍ DMN ເມືອງວັງວຽງແມ່ນປະກອບມີ:

| | | | |
|---|---|---|---|
| 1) | ທ່ານ ໂຄຕະມີ ສີບໍລິບານ | ຫົວໜ້າໜ່ວຍງານຄຸ້ມຄອງການທ່ອງທ່ຽວ | **ເປັນຫົວໜ້າ** |
| 2) | ທ່ານ ນາງ ທຽມໃຈ ພິລາວັນ | ການເງິນໂຄງການ | **ເປັນຮອງ** |
| 3) | ທ່ານ ນາງ ສອນທະວີ ດວງພະຈັນ | ບັນຊີໂຄງການ | ເປັນຄະນະ |
| 4) | ທ່ານ ທະນູທອງ ຫຼວງປັນຍາ | ວິຊາການໜ່ວຍງານຄຸ້ມຄອງການທ່ອງທ່ຽວ | ເປັນຄະນະ |

➢ **ໜ້າທີ່ຂອງກອງເລຂາເຄືອຂ່າຍ DMN ເມືອງວັງວຽງ:** ປະສານງານກັບບັນດາພາກລັດ, ພາກທຸລະກິດ, ໂຄງການ ແລະ ອົງການຈັດຕັ້ງສາກົນໃນຂະແໜງການທ່ອງທ່ຽວເມືອງວັງວຽງ ເພື່ອສ້າງ, ຈັດຕັ້ງປະຕິບັດ ແລະ ທົບທວນຄວາມຄືບໜ້າການຈັດຕັ້ງປະຕິບັດແຜນກິດຈະກຳພາກລັດ ແລະ ພາກທຸລະກິດ ໃນການພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວເມືອງວັງວຽງປະຈຳປີ.

➢ **ໜ້າທີ່ສະເພາະຂອງກອງເລຂາເຄືອຂ່າຍແມ່ນມີດັ່ງນີ້:**

1) ຈັດກອງປະຊຸມເຄືອຂ່າຍ DMN ເມືອງວັງວຽງ ຢ່າງໜ້ອຍ 2 ຄັ້ງຕໍ່ປີ: ກະກຽມວາລະກອງປະຊຸມ, ຮ່າງບັດເຊີນ, ກະກຽມສະຖານທີ່, ເອກະສານ ແລະ ອຸປະກອນສຳລັບກອງປະຊຸມ, ຂຶ້ນແຜນງົບປະມານ ແລະ ເຊີນຜູ້ເຂົ້າຮ່ວມ. ບັນທຶກເນື້ອໃນກອງປະຊຸມ, ເຮັດບົດລາຍງານ ແລະ ແຈກຢາຍໃຫ້ແກ່ສະມາຊິກເຄືອຂ່າຍພາຍຫຼັງສຳເລັດກອງປະຊຸມ.

2) ປະສານງານກັບພາກລັດ, ພາກທຸລະກິດ, ໂຄງການ ແລະ ອົງການຈັດຕັ້ງສາກົນ ໃນວຽກງານການທ່ອງທ່ຽວຂອງເມືອງວັງວຽງ ເພື່ອຕິດຕາມຄວາມຄືບໜ້າການຈັດຕັ້ງປະຕິບັດແຜນກິດຈະກຳພາກລັດ ແລະ ພາກທຸລະກິດ.

## III. ສະມາຊິກເຄືອຂ່າຍ DMN ເມືອງວັງວຽງແມ່ນປະກອບມີ:
(ເປົ້າໝາຍເພດຍິງແມ່ນຢ່າງໜ້ອຍ 40%)

| | | |
|---|---|---|
| 1) | ທ່ານ ນາງ ຕຸ່ ບັນທະວົງ | ຮອງປະທານສະຫະພັນແມ່ຍິງເມືອງ |
| 2) | ທ່ານ ນາງ ມະໂນໃຈ ປະເສີດ | ວິຊາການໜ່ວຍງານຄຸ້ມຄອງການທ່ອງທ່ຽວ |
| 3) | ທ່ານ ອຸດອນ ສີສຸທຳ | ປະທານກຸ່ມກິ່ງເບັ້ງເມືອງວັງວຽງ |
| 4) | ທ່ານ ນາງ ຄຳດວນ ໄຊຫຼວງສີ | ຮອງຫົວໜ້າກຸ່ມຮ້ານອາຫານ ແລະ ຮ້ານກິນດື່ມ |
| 5) | ທ່ານ ວຽງຊອງ ສີບໍລິບານ | ປະທານກຸ່ມເຮືອຈັກຫາງຍາວນຳທ່ຽວເມືອງວັງວຽງ |
| 6) | ທ່ານ ບຸນເຫຼືອ ກຸນລະວົງ | ປະທານກຸ່ມເຮືອກາຢັກເມືອງວັງວຽງ |
| 7) | ທ່ານ ບຸນປອນ ຄຳມັງ | ປະທານກຸ່ມບໍລິສັດທ່ອງທ່ຽວເມືອງວັງວຽງ |



สแกนด้วย CamScanner

8) ທ່ານ ນາງ ມະນີວອນ ອິນທະຈັກ ຄະນະສະພາການຄ້າ ແລະ ອຸດທະສາກຳເມືອງວັງວຽງ

9) ທ່ານ ຄຳປານ ລາດວົງໄຊ ປະທານກຸ່ມລົດບັກກີ້

10) ທ່ານ ນາງ ອໍລະໄທ ທອງງາມ ຜູ້ຈັດການໂຮງແຮມວັງວຽງແກຣນ(ອາມາຣີ)

11) ທ່ານ ຄຳຫຼ້າ ວິໄລວົງ ຜູ້ອຳນວຍການໂຮງແຮມວິໄລວົງ

12) ທ່ານ ນາງ ພິດສະໄໝ ພົມເມືອງ ຜູ້ຈັດການໂຮງແຮມຄຳປະເສີດ

ນອກຈາກສະມາຊິກທີ່ຖືກແຕ່ງຕັ້ງແລ້ວ, ເຄືອຂ່າຍຍັງສາມາດລະດົມສະມາຊິກໃຫ້ເຂົ້າຮ່ວມຫຼາຍຂຶ້ນຕື່ມໃນຕໍ່ໜ້າ ນັບທັງພາກລັດ ແລະ ພາກທຸລະກິດ ເພື່ອເຮັດໃຫ້ຫຼາຍພາກສ່ວນມີສ່ວນຮ່ວມໃນການພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວເມືອງວັງວຽງ.

- ໜ້າທີ່ຂອງສະມາຊິກເຄືອຂ່າຍ: ມີໜ້າທີ່ປະກອບຄຳຄິດຄຳເຫັນເຂົ້າໃນການສ້າງ, ຈັດຕັ້ງປະຕິບັດ ແລະ ທົບທວນຄວາມຄືບໜ້າການຈັດຕັ້ງປະຕິບັດແຜນກິດຈະກຳພາກລັດ ແລະ ພາກທຸລະກິດ ໃນການພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວຂອງເມືອງວັງວຽງປະຈຳປີ ຜ່ານກອງປະຊຸມເຄືອຂ່າຍທີ່ຈະໄດ້ຈັດຂຶ້ນຢ່າງໜ້ອຍ 2 ຄັ້ງຕໍ່ປີ ໂດຍການເປັນເຈົ້າການຮ່ວມກັນລະຫວ່າງພາກລັດ ແລະ ພາກທຸລະກິດ.

**ມາດຕາ 02:** ສຳລັບງົບປະມານໃນການເຄື່ອນໄຫວວຽກງານຂອງເຄືອຂ່າຍ DMN ເມືອງວັງວຽງແມ່ນໂຄງການພັດທະນາໂຄງລ່າງພື້ນຖານເພື່ອສົ່ງເສີມການທ່ອງທ່ຽວໄລຍະ 2 ເປັນຜູ້ສະໜັບສະໜູນ.

**ມາດຕາ 03:** ຂະແໜງການກ່ຽວຂ້ອງ, ບັນດາທ່ານທີ່ຖືກແຕ່ງຕັ້ງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ໃຫ້ມີປະສິດທິຜົນສູງສຸດ.

**ມາດຕາ 04:** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນຂໍ້ຕົກລົງສະບັບເລກທີ 935/ຈມ.ວວ, ລົງວັນທີ 22/12/2019.

**ເຈົ້າເມືອງວັງວຽງ**

ບຸນຈັນ ມາລາວົງ



สแกนด้วย CamScanner

ແຜນວາດທີ 1: ໂຄງປະກອບເຄືອຂ່າຍ DMN ເມືອງວັງວຽງ

**ຫົວໜ້າຄະນະບໍລິຫານງານເຄືອຂ່າຍ**

ທ່ານ ດວງດາລາ ພວງຈັນລາ

**ຮອງຫົວໜ້າຄະນະບໍລິຫານງານເຄືອຂ່າຍ**

ທ່ານ ສົມພັນ ສີສຸລາດ

ທ່ານ ບຸນພັນ ວົງສຳພັນ

**ຄະນະບໍລິຫານງານເຄືອຂ່າຍ**

- ທ່ານ ນາງ ວຽງສັກດາ ແສງສຸລິນ
- ທ່ານ ນາງ ພູຊຳ ຈັນທະຄຳລຽນ

**ກອງເລຂາເຄືອຂ່າຍ**

- ທ່ານ ໂຄຕະມີ ສີບໍລິບານ
- ນາງ ທຽມໃຈ ພິລາວັນ
- ນາງ ສອນທະວີ ດວງພະຈັນ
- ທ່ານ ທະນູທອງ ຫຼວງປັນຍາ

**ສະມາຊິກເຄືອຂ່າຍ**

- ບັນດາໜ່ວຍງານພາຍໃນຫ້ອງການ ຖວທ ເມືອງວັງວຽງ
- ສະມາຄົມທຸລະກິດທ່ອງທ່ຽວ, ສະມາຄົມໂຮງແຮມ-ເຮືອນພັກ, ຮ້ານອາຫານ, ກຸ່ມພະນັກງານນຳທ່ຽວ, ທຸລະກິດທ່ອງທ່ຽວ.

**ພາກສ່ວນເຂົ້າຮ່ວມກອງປະຊຸມເຄືອຂ່າຍ**

- ພາກລັດພາຍໃນຫ້ອງການ ຖວທ ເມືອງວັງວຽງ ແລະ ຫ້ອງການອື່ນ ອີງຕາມຫົວຂໍ້ການສົນທະນາ
- ພາກທຸລະກິດ
- ໂຄງການ ແລະ ອົງການຈັດຕັ້ງສາກົນໃນຂະແໜງການທ່ອງທ່ຽວເມືອງວັງວຽງ



สแกนด้วย CamScanner